**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ນະຄອນຫຼວງວຽງຈັນ, ວັນທີ 9/6/2020

# ໜຶ່ງໃນວຽກງານສັງຄົມ ແລະ ສິ່ງແວດລ້ອມ ຂອງຜ-ຟຟລ ໃນປີ 2020

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຫຼື ຜ-ຟຟລ ເປັນບໍລິສັດໜຶ່ງທີ່ມີໜ້າທີ່ຜະລິດພະລັງງານໄຟຟ້າ ເພື່ອຂາຍຍົກໃຫ້ລັດວິສາຫະກິດໄຟຟ້າລາວ (ຟຟລ) ແລະ ເຂົ້າຖືຮຸ້ນໃນບັນດາເຂື່ອນໄຟຟ້າ ຂອງ ບໍລິສັດ ຜະລິດໄຟຟ້າເອກະລາດ ເພື່ອສະໜອງຄວາມຕ້ອງການຊົມໃຊ້ພາຍໃນ ແລະ ສົ່ງອອກ. ຄຽງຄູ່ກັບການພັດທະນາດ້ານພະລັງງານ, ຜ-ຟຟລ ຍັງເຫັນຄວາມສຳຄັນໃນວຽກງານສັງຄົມ ແລະ ສິ່ງແວດລ້ອມດ້ວຍດີຕະຫຼອດມາ ໃນການປົກປັກຮັກສາສິ່ງແວດລ້ອມ ແລະ ຊີວະນາໆພັນ ໃຫ້ມີຄວາມອຸດົມສົມບູນ ແລະ ຍືນຍົງ ນອກຈາກນັ້ນ ຍັງໄດ້ເອົາໃຈໃສ່ໃນການພັດທະນາຊຸມຊົນ ທີ່ຢູ່ອາໃສອ້ອມຂ້າງເຂື່ອນ ເປັນຕົ້ນການພັດທະນາພື້ນຖານໂຄງລ່າງ ພ້ອມທັງໄດ້ສ້າງກິດຈະກຳຮ່ວມກັບຊາວບ້ານອ້ອມຂ້າງເຂື່ອນທີ່ບໍລິສັດຄຸ້ມຄອງ ເປັນຕົ້ນແມ່ນການປູກຕົ້ນໄມ້ ແລະ ປ່ອຍປາ, ມອບອຸປະກອນການແພດໃຫ້ສຸກສາລາ, ບໍລິຈາກເຄື່ອງນຸ່ງຫົ່ມໃຫ້ປະຊາຊົນຜູ້ທີ່ຂາດເຂີນ ແລະ ສະໜັບສະໜູນວຽກງານດ້ານການສຶກສາໃຫ້ໂຮງຮຽນທີ່ຢູ່ອ້ອມຂ້າງເຂື່ອນໃນແຕ່ລະປີອີກດ້ວຍ ເຊິ່ງໃນປີ 2019 ລວມເປັນມູນຄ່າທັງໝົດ 3,18 ຕື້ກີບ.

ສຳລັບປີ 2020 ນີ້ກໍ່ມີຫຼາຍກິດຈະກຳ ແລະ ຫຼາຍໂຄງການທີ່ໄດ້ມີການຂື້ນແຜນ ແລະ ຈະໄດ້ຈັດຕັ້ງປະຕິບັດ ທີ່ສຳຄັນມີ 2 ໂຄງການຫຼັກໆ ທີ່ເປັນໂຄງການ ບູລິມະສິດ ອັນດັບ 2 ຂອງຄະນະກຳມະການ ຄຸ້ມຄອງ ແລະ ນຳໃຊ້ ງົບປະມານຄຸ້ມຄອງອ່າງໂຕ່ງ ສິ່ງແວດລ້ອມ ແລະ ພັດທະນາຊຸມຊົນ ຂອງ ຜ-ຟຟລ ໂດຍນຳໃຊ້ທຶນຕາມສັນຍາ ສຳປະທານ ສະບັບລົງວັນທີ 24/07/2013 ຊຶ່ງໄດ້ມີການກຳນົດ ລະຫ່ວາງ ຜ-ຟຟລ ກັບ ລັດຖະບານ ໂດຍມີກົມທຸລະກິດ ພະລັງງານ ແລະ ບໍ່ແຮ່ ເປັນຜູ້ຄຸ້ມຄອງ. ໂຄງການດັ່ງກ່າວມີຄື: ການສ້ອມແປງເສັ້ນທາງ ແຕ່ເຂື່ອນໄຟຟ້ານ້ຳມັງ 3 ຫາ ບ້ານວັງເຮືອ ເມືອງທຸລະຄົມ ແຂວງວຽງຈັນ ຊຶ່ງໂຄງການດັ່ງກ່າວໄດ້ສຳເລັດແລ້ວ ແລະ ການກໍ່ສ້າງໂຮງຮຽນປະຖົມສົມບູນບ້ານແຊລະບຳ ແລະ ໂຄງການກໍ່ສ້າງຕາຂ່າຍ 0,4 kV, 22 kV ແລະ ຕິດຕັ້ງໝໍ້ແປງ 50 kVA 3 Phase, ເມືອງ ຊະນະສົມບູນ ແຂວງ ຈຳປາສັກ. ໂດຍໄດ້ນຳໃຊ້ງົບປະມານ ຂອງ ຜ-ຟຟລ ຕາມສັນຍາສຳປະທານ.

ໃນທ້າຍປີ 2019 ໄດ້ເກີດມີໄພພິບັດນ້ຳຖ້ວມທີ່ແຂວງພາກໃຕ້, ໂຮງຮຽນປະຖົມສົມບູນບ້ານແຊລະບຳກໍ່ແມ່ນໜຶ່ງທີ່ໄດ້ຮັບຜົນກະທົບຈາກໄພພິບັດດັ່ງກ່າວ, ຜ-ຟຟລ ໄດ້ສົມທົບກັບອຳນາດການປົກຄອງທ້ອງຖິ່ນ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:
www.edlgen.com.la

ຈັດສັນງົບປະມານ ເພື່ອປຸກສ້າງໂຮງຮຽນຫຼັງໃຫມ່ໃຫ້ ຊຶ່ງໂຄງການກໍ່ສ້າງ ໂຮງຮຽນປະຖົມສົມບູນບ້ານແຊລະບໍາ ເມືອງ ຊະນະສົມບູນ ແຂວງ ຈໍາປະສັກ ໄດ້ດໍາເນີນການກໍ່ສ້າງມາຮອດຕົ້ນເດືອນ ມິຖຸນາ 2020 ສໍາເລັດປະມານ 15 ສ່ວນຮ້ອຍ ຄາດວ່າຈະສໍາເລັດຕາມແຜນການໃນທ້າຍເດືອນ ພະຈິກ ປີ 2020 ນີ້. ໂຄງການດັ່ງກ່າວນີ້ ມີທີ່ຕັ້ງຢູ່ ຫ່າງຈາກເຂື່ອນ ໄຟຟ້າແຊລະບໍາ ປະມານ 2 ກິໂລແມັດ ເປັນອາຄານຊັ້ນດຽວ ມີທັງໝົດ 5 ຫ້ອງ ມີມູນຄ່າໃນການກໍ່ສ້າງ ທັງໝົດປະມານ 889 ລ້ານກີບ ໂດຍ ໄດ້ຮັບການສະໜັບສະໜູນທຶນໃນການກໍ່ສ້າງໂດຍ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຫຼື ຜ-ຟຟລ. ນອກຈາກໂຄງການ ກໍ່ສ້າງໂຮງຮຽນປະຖົມສົມບູນບ້ານແຊລະບໍາແລ້ວ ຜ-ຟຟລ ຍັງໄດ້ສະໜັບສະໜູນທຶນ ເປັນມູນຄ່າ ປະມານ 244 ລ້ານກີບ ໃນການກໍ່ສ້າງໂຄງການ ຕາຂ່າຍໄຟຟ້າ 0,4 kV, 22 kV ແລະ ຕິດຕັ້ງໝໍ້ແປງ 50 kVA 3 Phase ເພື່ອສະໜອງໄຟໃຫ້ໂຮງຮຽນປະຖົມສົມບູນບ້ານແຊລະບໍາແຫ່ງໃໝ່ນີ້ ແລະ ນໍາໃຊ້ເຂົ້າໃນຫມູ່ບ້ານຈັດສັນໃຫມ່ ຂອງບ້ານແຊລະບໍາ ອີກດ້ວຍ ເຊິ່ງທັງສອງໂຄງການ ລວມມູນຄ່າ ປະມານ 1.133 ລ້ານກີບ (ໜຶ່ງພັນໜຶ່ງຮ້ອຍສາມສິບສາມລ້ານກີບ).

ພາຍຫຼັງທີ່ໂຄງການດັ່ງກ່າວສໍາເລັດ ຈະເປັນການປະກອບສ່ວນອັນສໍາຄັນ ໃນການສະໜັບສະໜູນວຽກງານດ້ານການສຶກສາຂອງປະເທດ ກໍ່ຄືຂອງແຂວງ ຂອງເມືອງ ໃຫ້ດີຂຶ້ນເທື່ອລະກ້າວ ເອົາໃຈໃສ່ເປັນພິເສດໃຫ້ແກ່ລູກຫຼານ ທີ່ເປັນອານາຄົດຂອງຊາດ ໃຫ້ມີຄວາມຮັບປະກັນທາງດ້ານຄຸນນະພາບການສຶກສາ, ລວມທັງອໍານວຍຄວາມສະດວກໃຫ້ກັບຊຸມຊົນອ້ອມຂ້າງເຂື່ອນໃຫ້ມີຊີວິດທີ່ດີຂຶ້ນໄປພ້ອມໆກັບການພັດທະນາພື້ນຖານໂຄງລ່າງຢ່າງບໍ່ຢຸດຢັ້ງ.

 

Lao-Thai Friendship Road, Thongkang Village, Sisattanak District, Vientiane Lao PDR.
P.O BOX 2392, Tel: (856-21) 316142, Fax:(856-21)316141. E-mail: edlgenhq@edlgen.com.la, www.edlgen.com.la